# ອົງການຊ່ວຍເຫຼືອເດັກສາກົນ ປະຈຳ ສປປ ລາວ ສືບຕໍ່ແຈກຢາຍເຄື່ອງໃຊ້ສຳຄັນໃຫ້ແກ່ຄົວເຮືອນທີ່ປະສົບໄພນ້ຳຖ້ວມຢູ່ເມືອງວຽງຄຳ ເພື່ອສ້າງຊີວິດການເປັນຢູ່ແບບຍືນຍົງ ແລະ ຄວາມຕ້ານທານ



ໂດຍ : ອົງການຊ່ວຍເຫຼືອເດັກສາກົນ ປະຈຳ ສປປ ລາວ

ອົງການຊ່ວຍເຫຼືອເດັກສາກົນ ປະຈຳ ສປປ ລາວ ສືບຕໍ່ມອບເຄື່ອງຊ່ວຍເຫຼືອໃຫ້ຄອບຄົວປະຊາຊົນຜູ້ທີ່ຖືກປະສົບອຸທົກກະໄພນ້ຳຖ້ວມທີ່ເມືອງວຽງຄຳ ແຂວງຫຼວງພະບາງ ພິທີມອບເຄື່ອງດັ່ງກ່າວໄດ້ມີຂຶ້ນເມື່ອບໍ່ດົນມານີ້ ທີ່ບ້ານຕຸ່ມມຶ່ງ ເມືອງວຽງຄຳ ແຂວງຫຼວງພະບາງ ໂດຍການກ່າວມອບຂອງທ່ານ ລຸກ ເອບ ຜູ້ອຳນວຍການໃຫຍ່ ອົງການຊ່ວຍເຫຼືອເດັກສາກົນປະຈຳ ສປປ ລາວ ແລະ ກ່າວຮັບໂດຍທ່ານ ແທ້ ເພັດຕະກອນ ຮອງເຈົ້າເມືອງ ປະທານຄະນະຮັບຜິດຊອບໄພພິບັດຂັ້ນເມືອງວຽງຄຳ ໂດຍມີທ່ານຜູ້ຕາງໜ້າຈາກກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງການຕ່າງປະເທດ ແລະ ພະແນກການທີ່ກ່ຽວຂ້ອງທີ່ກ່ຽວຂ້ອງ, ຕາງໜ້າຈາກພະແນກການຂອງແຂວງ, ຄະນະທີມງານຂອງອົງການ, ຄະນະຮັບຜິດຊອບຂອງເມືອງ, ບັນດາຄະນະອຳນາດການປົກຄອງບ້ານຕະຫຼອດຮອດປະຊາຊົນ ແລະ ແຂກຖືກເຊີນກ່ຽວຂ້ອງເຂົ້າຮ່ວມ ເປັນສັກຂີພິຍານ.

ທ່ານ ຈັນເພັງ ພັນນະສີ ຫົວໜ້າຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ເມືອງວຽງຄຳ ໄດ້ກ່າວລາຍງານໃຫ້ຮູ້ວ່າ: ເມືອງວຽງຄຳ ໄດ້ຮັບຜົນກະທົບອຸທົກກະໄພນ້ຳຖ້ວມໃນຄັ້ງວັນທີ 24-25 ກໍລະກົດ 2024 ທີ່ຜ່ານມາ, ອົງການຊ່ວຍເຫຼືອເດັກສາກົນ ປະຈຳ ສປປ ລາວ ໂດຍສະເພາະຫ້ອງການປະສານອົງການປະຈຳແຂວງ ໂດຍຜ່ານໂຄງການໂຮງຮຽນທີ່ປອດໄພໃນ ສປປ ລາວ ໄດ້ຮ່ວມມືກັບອົງການກາແດງລາວ ແຂວງຫຼວງພະບາງ ໄດ້ໃຫ້ການຊ່ວຍເຫຼືອຜູ້ປະສົບໄພນ້ຳຖ້ວມ ຈຳນວນ 7 ບ້ານເປົ້າໝາຍ ມີ 402 ຄອບຄົວ, ໃນໄລຍະທີ່ຜ່ານມາອົງການຊ່ວຍເຫຼືອເດັກສາກົນໄດ້ໃຫ້ການຊ່ວຍເຫຼືອຮີບດ່ວນຄັ້ງທຳອິດ ໂດຍສະເພາະໂຄງການ ໂຮງຮຽນທີ່ປອດໄພ ໄດ້ໃຫ້ການຊ່ວຍເຫຼືອເຄື່ອງໃຊ້ທີ່ຈຳເປັນສຳລັບຄອບຄົວ ມູນຄ່າ 10.000.000 ກີບ, ຄັ້ງທີ II ໃນມູນຄ່າ 883.722.000 ກີບ ແລະ ການຊ່ວຍເຫຼືອໃນຄັ້ງນີ້ແມ່ນກະຊວງການຕ່າງປະເທດໄດ້ອະນຸມັດຮັບເອົາການຊ່ວຍເຫຼືອສຸກເສີນຈາກອົງການຊ່ວຍເຫຼືອເດັກສາກົນປະຈຳ ສປປ ລາວທີ່ໄດ້ຮັບກອງທຶນຈາກ ສະຕາທ໌ ຟັນ, ມູນຄ່າ 2.517.432.000 ກີບ ຊຶ່ງລວມມູນຄ່າການຊ່ວຍເຫຼືອທັງໝົດ 3.411.124.000 ກີບ, ສຳລັບການມອບເຄື່ອງຊ່ວຍເຫຼືອໃນຄັ້ງນີ້ແມ່ນອົງການຊ່ວຍເຫຼືອເດັກປະຈຳແຂວງຫຼວງພະບາງເປັນຜູ້ຈັດຕັ້ງປະຕິບັດຮ່ວມກັບຄູ່ຮ່ວມງານພາກລັດແຕ່ລະຂັ້ນ, ມອບເຄື່ອງຊ່ວຍເຫຼືອຈຳນວນ 41 ລາຍການເຊັ່ນ: ເປັນເຄື່ອງໃຊ້ຄົວເຮືອນ 14 ລາຍການ, ເຄື່ອງມືເຮັດສວນ ແລະ ອຸປະກອນປຸກສ້າງເຮືອນ 14 ລາຍການ, ແນວພັນພືດສວນຄົວ 5 ລາຍການ ແລະ ເຄື່ອງນອນ 5 ລາຍການມອບໃຫ້ 402 ຄອບຄົວ




ຜູ້ປະສົບອຸທົກກະໄພນ້ຳຖ້ວມໃນ 7 ບ້ານເປົ້າໝາຍຄື: ບ້ານເມືອງພ້ອຍ, ຫ້ວຍໂກນ, ວັງຄຳ, ຕຸ່ມມຶ່ງ, ວຽງທອງ, ສົບເຮືອງ ແລະ ປ່າໄຜ່ ເພື່ອເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນຜູ້ຖືກຜົນກະທົບໄດ້ມີກຳລັງໃຈ ແລະ ມີຊີວິດການເປັນຢູ່ດີຂຶ້ນ. ຈຸດປະສົງຂອງການມອບເຄື່ອງໃນເທື່ອນີ້ກໍເພື່ອເປັນການແບ່ງເບົາພາລະຄວາມຮັບຜິດຊອບຂອງປະຊາຊົນຜູ້ທີ່ຖືກຜົນກະທົບ ແລະ ສະໜັບສະໜູນເດັກໃຫ້ສາມາດກັບເຂົ້າໂຮງຮຽນໄດ້ຢ່າງເປັນປົກກະຕິ ພ້ອມທັງເປັນການສົ່ງເສີມ ແລະ ສະໜັບສະໜູນການຈັດຕັ້ງປະຕິບັດກິດຈະກຳວຽກງານການຊ່ວຍເຫຼືອບັນເທົາ ແລະ ການຕອບໂຕ້ສຸກເສີນຈາກໄພພິບັດພາຍໃນ ສປປ ລາວ.

ໂອກາດນີ້, ທ່ານ ແທ້ ເພັດຕະກອນ ໄດ້ກ່າວສະແດງຄວາມຂອບອົກຂອບໃຈມາຍັງຄະນະທີມງານຂັ້ນສູນກາງ, ຂັ້ນແຂວງ ໂດຍສະເພາະອົງການຊ່ວຍເຫຼືອເດັກສາກົນ ປະຈຳ ສປປ ລາວ ທີ່ຍາມໃດກໍ່ມີຄວາມເປັນຫ່ວງເປັນໃຍ ແລະ ນຳເອົາການອຸ້ມຊູຊ່ວຍເຫຼືອ ເພື່ອແບ່ງເບົາແກ້ໄຂການດຳລົງຊີວິດການເປັນຢູ່ຂອງປະຊາຊົນຄອບຄົວທີ່ຖືກອຸທົກກະໄພນ້ຳຖ້ວມ ພ້ອມດຽວກັນນີ້ທ່ານຍັງໄດ້ຮຽກຮ້ອງມາຍັງອົງການປົກຄອງບ້ານ, ການຈັດຕັ້ງທຸກພາກສ່ວນ ແລະ ປະຊາຊົນຜູ້ທີ່ຖືກຜົນກະທົບໃຫ້ມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ບໍ່ໃຫ້ມີແນວຄິດຄອງຄອຍ ແຕ່ຈາກການຊ່ວຍເຫຼືອ, ໃຫ້ທຸກພາກສ່ວນຈົ່ງໄດ້ພ້ອມກັນຕັ້ງໜ້າສ້າງເສດຖະກິດພັດທະນາຄອບຄົວໃຫ້ມີຄວາມເຂັ້ມແຂງ, ສາມາດເພິ່ງຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ແລະ ແກ້ໄຂຊີວິດການເປັນຢູ່ດ້ວຍຕົນເອງຢ່າງຕັ້ງໜ້າ. ນອກຈາກນີ້, ຄະນະຮັບຜິດຊອບທຸກພາກສ່ວນໄດ້ຮ່ວມກັນລົງກວດກາປະເມີນຄືນໃນການກະກຽມໃຫ້ການຊ່ວຍເຫຼືອຟື້ນຟູໂຮງຮຽນປະຖົມສົມບູນສົບເຮືອງຕື່ມອີກ.

ທ່ານ ລຸກ ເອບສ໌ ຜູ້ອຳນວຍການຂອງອົງການຊ່ວຍເຫຼືອເດັກສາກົນ ປະຈຳ ສປປ ລາວ ກ່າວວ່າ: "ພວກເຮົາມຸ່ງໝັ້ນທີ່ຈະສະໜອງການຊ່ວຍເຫຼືອແກ່ລັດຖະບານ ແລະ ຊຸມຊົນ" ໃນລາວໃນການປະເຊີນກັບໄພຂົ່ມຂູ່ຈາກໄພພິບັດທຳມະຊາດທີ່ມີຄວາມຮຸນແຮງຫຼາຍຂຶ້ນ ແລະ ເກີດຂຶ້ນເລື້ອຍໆ ໂດຍຜ່ານການສະໜັບສະໜູນຂອງຄູ່ຮ່ວມງານທົ່ວໂລກຂອງພວກເຮົາ ແລະ ກອງທຶນສະຕາທ໌ຟັນ, ພວກເຮົາສະໜອງອຸປະກອນທີ່ຈຳເປັນໃຫ້ແກ່ຄອບຄົວທີ່ຖືກຜົນກະທົບ, ເຊັ່ນເຄື່ອງກອງນ້ຳ ແລະ ອຸປະກອນການກໍ່ສ້າງ, ເພື່ອຮັບປະກັນວ່າເດັກນ້ອຍ ໂດຍສະເພາະຜູ້ທີ່ມີຄວາມບອບບາງທີ່ສຸດ, ສາມາດກັບຄືນສູ່ສະພາບແວດລ້ອມທີ່ປອດໄພ ແລະ ສາມາດຈະເລີນເຕີບໃຫຍ່ໄດ້ຢ່າງປອດໄພ. ການຊ່ວຍເຫຼືອນີ້ມີຄວາມສຳຄັນໃນການສະໜັບສະໜູນການຟື້ນຟູຢ່າງຮີບດ່ວນ ພ້ອມທັງເປັນການວາງພື້ນຖານໃຫ້ແກ່ການຮັບມືຕໍ່ໄພພິບັດໃນອະນາຄົດ".

ການແຈກຢາຍເຄື່ອງຊ່ວຍເຫຼືອດັ່ງກ່າວຄາດວ່າຈະສົ່ງຜົນກະທົບດ້ານບວກຢ່າງຫຼວງຫຼາຍຕໍ່ຊີວິດຂອງກຸ່ມຜູ້ໄດ້ຮັບຜົນກະທົບຈາກອຸທົກກະໄພທີ່ມີຄວາມບອບບາງ ໂດຍສະເພາະແມ່ຍິງຖືພາ ແລະ ແມ່ໃຫ້ນົມລູກ, ເດັກຍິງ ແລະ ເດັກທີ່ອາຍຸຍັງນ້ອຍ ໂດຍການຮັບປະກັນວ່າ ພວກເຂົາຈະມີສະຖານທີ່ສ່ວນຕົວ ແລະປອດໄພ ໂດຍການສະໜອງວັດສະດຸກໍ່ສ້າງໃຫ້ຄອບຄົວທີ່ໄດ້ຮັບຜົນກະທົບສາມາດເລີ່ມຕົ້ນປັບແປງກໍ່ສ້າງເຮືອນ ແລະໂຮງຮຽນຄືນໃໝ່ໄດ້ທັນທີ. ນອກຈາກນັ້ນ, ແກ່ນພືດຜັກທີ່ສະໜອງໃຫ້ນັ້ນຈະຊ່ວຍເພີ່ມຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ຊຸກຍູ້ການຟື້ນຕົວທາງດ້ານ ເສດຖະກິດໃນຫຼາຍເດືອນຂ້າງໜ້າ ໂດຍການລວມເອົາບັນດາລາຍການບັນເທົາທຸກທີ່ຈຳເປັນກັບການຊ່ວຍເຫຼືອດ້ານກະສິກຳ, ຄວາມພະຍາຍາມເຫຼົ່ານີ້ຈະຊ່ວຍໃຫ້ຊຸມຊົນທີ່ມີຄວາມບອບບາງມີຄວາມໝັ້ນຄົງ ແລະ ມີຄວາມທົນທານຕໍ່ກັບໄພພິບັດໃນອະນາຄົດ.

ດ້ວຍການສະໜັບສະໜູນຈາກກອງທຶນ ສະຕາທ໌ ຟັນ ແລະການປະສານງານກັບຄູ່ຮ່ວມງານຂັ້ນທ້ອງຖິ່ນ, ອົງການຊ່ວຍເຫຼືອເດັກຈະຍັງຄົງໃຫ້ຄຳໝັ້ນສັນຍາທີ່ຈະສະໜັບສະໜູນຊຸມຊົນເຫຼົ່ານີ້ ເພື່ອໃຫ້ໝັ້ນໃຈວ່າ ພວກເຂົາເຈົ້າຈະສາມາດສ້າງຊີວິດຂອງເຂົາເຈົ້າຄືນໃໝ່ໄດ້ ແລະ ເສີມສ້າງຄວາມທົນທານຂອງເຂົາເຈົ້າຕໍ່ກັບໄພພິບັດໃນອະນາຄົດ.

